Lao/ລາວ

AEC Australian Electoral Commission

# ຄຳແນະນຳ ທາງການ ສຳລັບທ່ານ ກ່ຽວກັບ ການເລືອກຕັ້ງຣັຖບານກາງ ປີ 2019

## ວັນເສົາ ວັນທີ 18 ພຶສພາ (5) 2019




ການປ່ອນບັດເລືອກຕັ້ງແມ່ນເປັນການບັງຄັບສຳລັບ ພົລເມືອງອອສເຕຣເລັຍທີ່ມີອາຍຸ 18 ປີແລະຫຼາຍກວ່າ

## ມື້ປ່ອນບັດເລືອກຕັ້ງ ແມ່ນ ວັນເສົາ ວັນທີ 18 ພຶສພາ (5) 2019. ສະຖານທີ່ປ່ອນບັດເລືອກຕັ້ງເປີດ ເວລາ 8 ໂມງເຊົ້າແລະ ປິດ ເວລາ 6 ໂມງແລງຕົງ.

## ຂ້ອຍຈະສາມາດປ່ອນບັດໄດ້ຢູ່ໃສ?

ທ່ານສາມາດປ່ອນບັດເລືອກຕັ້ງໄດ້ຢູ່ທຸກໆສະຖານທີ່ປ່ອນບັດເລືອກຕັ້ງຢູ່ໃນຣັດ ຫຼື ອານາເຂດຂອງທ່ານໃນມື້ປ່ອນບັດ.

ຕາມປົກກະຕິແລ້ວ ສະຖານທີ່ປ່ອນບັດເລືອກຕັ້ງແມ່ນຕັ້ງຢູ່ຕາມບັນດາໂຮງຮຽນ, ໂບດ ແລະ ສູນຊຸມຊົນໃນທ້ອງຖິ່ນ ຫຼື ຕາມຕຶກສາທາຣະນະຕ່າງໆ.

ເພື່ອຊອກຫາສະຖານທີ່ປ່ອນບັດເລືອກຕັ້ງທີ່ໃກ້ທ່ານທີ່ສຸດຈົ່ງເຂົ້າໄປເບິ່ງ **www.aec.gov.au/where**. ນອກຈາກນີ້ລາຍລະອຽດຂອງສະຖານທີ່ປ່ອນບັດເລືອກຕັ້ງກໍຍັງຈະຖືກພິມອອກຕາມໜັງສືພິມທີ່ສຳຄັນ ຕ່າງໆກ່ອນມື້ເລືອກຕັ້ງນັ່ງມື້.

ທ່ານສາມາດກວດເບິ່ງອັດຕາການເຂົ້າເຖິງ ແລະ ລາຍລະອຽດສະຂອງຖານທີ່ປ່ອນບັດເລືອກຕັ້ງຕ່າງໆ ໄດ້ທີ່ **www.aec.gov.au/where**.

ການເລືອກວິທີປ່ອນບັດເລືອກຕັ້ງສຳລັບຜູ້ຕາບອດ ຫຼື ສາຍຕາບໍ່ດີ ນັ້ນ ກະຣຸນາໂທຫາໝາຍເລກ 13 23 26.

ຖ້າທ່ານຈະຢູ່ຕ່າງຣັດໃນມື້ເລືອກຕັ້ງ ທ່ານສາມາດປ່ອນບັດໄດ້ຕາມສູນປ່ອນບັດທີ່ຈັດໄວ້ໃນຕ່າງຣັດ, ຫຼື ພິຈາຣະນາເບິ່ງທາງເລືອກໃນການປ່ອນບັດລ່ວງ ໜ້າຕາມຂ້າງລຸ່ມນີ້.

## ຖ້າຂ້ອຍໄປປ່ອນບັດໃນມື້ເລືອກຕັ້ງບໍ່ໄດ້ເດ?

ຖ້າທ່ານບໍ່ສາມາດໄປປ່ອນບັດຢູ່ສະຖານທີ່ປ່ອນບັດຢູ່ໃນຣັດຫຼືອານາເຂດຂອງທ່ານໃນມື້ເລືອກ ຕັ້ງໄດ້ ທ່ານອາດມີສິດປ່ອນບັດກ່ອນກໍໄດ້ໂດຍຕົວເອງ ຫຼື ໂດຍທາງໄປສະນີ.

### ປ່ອນບັດລ່ວງໜ້າດ້ວຍຕົວເອງໄດ້ຢ່າງໃດ

ທ່ານສາມາດປ່ອນບັດລ່ວງໜ້າຢູ່ສະຖານທີ່ປ່ອນບັດລ່ວງໜ້າກ່ອນມື້ເລືອກຕັ້ງ, ບ່ອນທີ່ມີທີມຮັບຜິດຊອບການປ່ອນບັດເລືອກຕັ້ງເຄື່ອນທີ່ , ຫຼື ຕາມສູນປ່ອນບັດອອສເຕຣເລັຍທີ່ຢູ່ຕ່າງປະເທດ

ສູນປ່ອນບັດລ່ວງໜ້າເປີດຈາກ **ວັນຈັນ ວັນທີ 29 ເມສາ (4) 2019.** ວັນທີ ແລະ ເວລາເປີດຈະແຕກຕ່າງກັນໄປດັ່ງນັ້ນຈົ່ງເຂົ້າຢ້ຽມເບິ່ງ **www.aec.gov.au/where** ເພື່ອກວດເບິ່ງລາຍລະອຽດຂອງສູນປ່ອນບັດລ່ວງໜ້າແຕ່ລະແຫ່ງ.

ເພື່ອເອົາຂໍ້ມູນເພີ້ມເຕີມ ຮວມທັງການມີສິດ, ຈົ່ງເຂົ້າຢ້ຽມເບິ່ງ **www.aec.gov.au** ຫຼື ໂທຫາໝາຍເລກ 13 23 26.

### ປ່ອນບັດລ່ວງໜ້າທາງໄປສະນີໄດ້ຢ່າງໃດ

ຖ້າມີສິດ, ທ່ານສາມາດຂໍປ່ອນບັດທາງໄປສະນີທາງອອນໄລນ໌ໄດ້ທີ່ **www.aec.gov.au/pva**. ຟອມຂໍປ່ອນບັດທາງໄປສະນີນີ້ ມີໄວ້ໃຫ້ຕາມຫ້ອງການ AEC ທຸກແຫ່ງ. ສົ່ງຟອມນີ້ໄປໃຫ້ AEC ໄວເທົ່າທີ່ໄວໄດ້ເພື່ອໃຫ້ເຖິງພວກເຮົາ ບໍ່ໃຫ້ຊ້າກວ່າ **6 ໂມງແລງ ຂອງ ວັນພຸດ ວັນທີ 15 ພຶສພາ (5) 2019.**

## ເຂດປ່ອນບັດເລືອກຕັ້ງຂອງຂ້ອຍໄດ້ປ່ຽນແລ້ວບໍ?

ດຽວນີ້ມີເຂດເລືອກຕັ້ງຣັຖບານກາງ 151 ເຂດ (ຮວມທັງເຂດໃໝ່ສອງເຂດ). ບາງເຂດກໍໄດ້ຖືກໃສ່ຊື່ໃໝ່, ແລະ ເສັ້ນແບ່ງເຂດຂອງຫຼາຍເຂດກໍໄດ້ປ່ຽນໄປນັບຕັ້ງ ແຕ່ການເລືອກຕັ້ງຄັ້ງກ່ອນ.

ຈົ່ງກວດເບິ່ງວ່າທ່ານຢູ່ໃນເຂດເລືອກຕັ້ງໃດໄດ້ທີ່ **www.aec.gov.au/electorate**.

## ທ່ານຈະປ່ອນບັດເລືອກເອົາໃຜເປັນການຕັດສິນໃຈຂອງທ່ານ

ຢູ່ຂ້າງນອກຂອງສະຖານທີ່ປ່ອນບັດບັນດາຜູ້ຕ່າງໜ້າຂອງຜູ້ມີຊື່ລົງສມັກອາດຈະສເນີເຈັ້ຍ ບອກ-ວິທີ-ເລືອກຕັ້ງ ໃຫ້ທ່ານເພື່ອແນະນຳໃຫ້ທ່ານປ່ອນບັດລົງຄະແນນໃນທາງສະເພາະໃດນຶ່ງ. ທ່ານບໍ່ຈຳເປັນຕ້ອງຮັບເອົາ ຫຼື ເຮັດຕາມເຈັ້ຍ ບອກ-ວິທີ-ເລືອກຕັ້ງ ນັ້ນ.

## ຈະເຮັດແນວໃດເພື່ອໃຫ້ຄະແນນຂອງທ່ານຖືກນັບ

ໃນມື້ເລືອກຕັ້ງທ່ານຈະໄດ້ຮັບ**ເຈັ້ຍລົງຄະແນນສອງໃບ**:

- ໃບສີຂຽວນຶ່ງໃບ ສໍາລັບ ສະມາຊິກສະພາຕໍ່າ, ແລະ
- ໃບສີຂາວນຶ່ງໃບ ສໍາລັບສະມາຊິກສະພາສູງ.

ທ່ານຕ້ອງຂຽນຕື່ມເຈັ້ຍລົງຄະແນນທັງສອງໃບ.

ຢູ່ເຈັ້ຍລົງຄະແນນສີຂຽວ ທ່ານລົງຄະແນນເລືອກເອົາຜູ້ຕ່າງໜ້າຂອງເຂດທ້ອງຖິ່ນຂອງທ່ານ ຫຼື ເຂດເລືອກຕັ້ງ ຂອງ ທ່ານໃຫ້ເຂົ້າໄປຢູ່ໃນສະພາຕໍ່າ.

ຢູ່ເຈັ້ຍລົງຄະແນນສີຂາວ ທ່ານລົງຄະແນນເລືອກເອົາຜູ້ຕ່າງໜ້າຂອງຣັດ ຫຼື ອານາເຂດຂອງທ່ານໃຫ້ເຂົ້າ ໄປຢູ່ໃນ ສະພາສູງ.

**ຢ່າເປັນຫ່ວງຖ້າທ່ານເຮັດຜິດ. ທ່ານສາມາດຂໍເອົາເຈັ້ຍລົງຄະແນນໃບໃໝ່ ແລະ ເລີ້ມຕົ້ນຂຽນໃໝ່ອີກ.**

ທ່ານເຄີຍຮູ້ບໍ່ວ່າ ທ່ານສາມາດເຝິກຫັດການລົງຄະແນນເລືອກຕັ້ງໄດ້ທີ່ເວັບໄຊຕ໌ຂອງ AEC ເປີດໄປເບິ່ງທີ່:
**www.aec.gov.au/practise-voting**

### ສະພາຕໍ່າ

ຢູ່ເຈັ້ຍລົງຄະແນນສີຂຽວ ທ່ານຕ້ອງໝາຍເລກໃສ່ **ໝົດທຸກໆປ່ອງ** ຕາມລໍາດັບຄວາມມັກຂອງທ່ານ.




ຕົວຢ່າງເຈັ້ຍລົງຄະແນນ

## ສະພາສູງ

ຢູ່ເຈັ້ຍລົງຄະແນນສີຂາວນັ້ນ ທ່ານມີສອງທາງເລືອກ ໃນ ການລົງຄະແນນ.

**ເລືອກເອົາ**

### ຢູ່ຂ້າງເທິງເສັ້ນ

ຖ້າທ່ານເລືອກວ່າຈະລົງຄະແນນຢູ່ຂ້າງເທິງເສັ້ນ ທ່ານຕ້ອງ **ໝາຍເລກລົງໃສ່ຢ່າງນ້ອຍ 6 ປ່ອງ.**

ໝາຍເລກ '1' ໃສ່ຢູ່ໃນປ່ອງສຳລັບຊື່ພັກ ຫຼື ກຸ່ມທີ່ເປັນຄວາມມັກທີນຶ່ງຂອງທ່ານ, ໝາຍເລກ '2' ສຳລັບການເລືອກທີ່ທ່ານມັກເປັນທີສອງ ແລະ ຕໍ່ໆໄປຈົນກວ່າທ່ານຈະໄດ້ໃສ່ເລກໃນ 6ປ່ອງເປັນຢ່າງຕໍ່າ. ທ່ານສາມາດສືບຕໍ່ການໝາຍເລກໃສ່ໃນປ່ອງຕາມລຳດັບຄວາມມັກຂອງທ່ານ ໄປອີກ ຫຼາຍເທົ່າທີ່ທ່ານຕ້ອງການ.




**ຫຼື**

### ຢູ່ຂ້າງລຸ່ມເສັ້ນ

ຖ້າທ່ານເລືອກການລົງຄະແນນຢູ່ຂ້າງລຸ່ມເສັ້ນ ທ່ານຕ້ອງ**ໝາຍເລກໃສ່ 12 ປ່ອງເປັນຢ່າງຕໍ່າ**, ຈາກ 1 ຫາ 12, ສຳລັບຜູ້ລົງສມັກເລືອກຕັ້ງແຕ່ລະຄົນຕາມລຳດັບຄວາມມັກຂອງທ່ານ. ທ່ານສາມາດສືບຕໍ່ ໝາຍເລກໃສ່ໃນປ່ອງຕາມລຳດັບຄວາມ ມັກຂອງທ່ານຫຼາຍເທົ່າທີ່ທ່ານຕ້ອງການ.




ຕົວຢ່າງເຈັ້ຍລົງຄະແນນ

**ຢ່າເປັນຫ່ວງຖ້າທ່ານເຮັດຜິດ. ທ່ານສາມາດຂໍເອົາເຈັ້ຍລົງຄະແນນໃບໃໝ່ ແລະ ເລີ່ມຕົ້ນຂຽນໃໝ່ອີກ.**

ທ່ານເຄີຍຮູ້ບໍ່ວ່າ ທ່ານສາມາດເຝິກຫັດການລົງຄະແນນເລືອກຕັ້ງໄດ້ທີ່ເວັບໄຊຕ໌ຂອງ AEC
ເປີດໄປເບິ່ງທີ່: **www.aec.gov.au/practise-voting**

## ຈະຫຍັງເກີດຂຶ້ນຢູ່ບ່ອນປ່ອນບັດເລືອກຕັ້ງ?

1. ເຈົ້າໜ້າທີ່ຈະຖາມທ່ານເຖິງຊື່ເຕັມແລະທີ່ຢູ່ຂອງ ທ່ານ ແລະ ຈະຖາມວ່າທ່ານໄດ້ປ່ອນບັດມາກ່ອນແລ້ວບໍໃນການເລືອກຕັ້ງຄັ້ງນີ້. ພວກເຂົາຈະຂີດຊື່ ທ່ານອອກຈາກບັນຊີລາຍຊື່ເລືອກຕັ້ງ.



2. ທ່ານຈະໄດ້ຮັບເຈັ້ຍລົງຄະແນນສອງໃບ – ສີຂຽວສໍາລັບເລືອກເອົາຜູ້ແທນສະພາຕໍ່າ ແລະ ສີຂາວ ສໍາລັບເລືອກເອົາຜູ້ແທນສະພາສູງ.



3. **ທ່ານຄວນອ່ານຄໍາແນະນໍາທີ່ຢູ່ໃນເຈັ້ຍລົງຄະແນນທັງສອງໃບໃຫ້ດີໆ.** ໃຫ້ຂໍຄວາມຊ່ວຍເຫຼືອຈາກເຈົ້າ ໜ້າທີ່ຮັບຜິດຊອບການເລືອກຕັ້ງຖ້າທ່ານບໍ່ແນ່ໃຈ.



4. ຫຼັງຈາກທີ່ທ່ານຂຽນໃສ່ບັດລົງຄະແນນຮຽບຮ້ອຍແລ້ວ ຈຶ່ງພັບແລ້ວເອົາໃສ່ໃນກ່ອງທີ່ມີໄວ້ໃຫ້ຖືກຕ້ອງ.

## ເອກກະສານອີກແບບນຶ່ງຂອງຄໍາແນະນໍານີ້

ທ່ານສາມາດດາວໂຫຼດເອົາວິທີນໍາໃຊ້ໃນຮູບແບບອື່ນໆເຊັ່ນທາງສຽງຟັງ ແລະ ໂຕໜັງສືໃຫຍ່ໄດ້ຈາກ **www.aec.gov.au**. ໂຕໜັງສືນູນສໍາລັບຄົນຕາບອດກໍມີໄວ້ໃຫ້ຕາມຄໍາຂໍ ດ້ວຍການໂທຫາໝາຍເລກ 13 23 26.

ຖ້າທ່ານຫູໜວກ ຫຼື ມີຄວາມພິການທາງຫູ ຫຼື ການເວົ້າ ຈົ່ງຕິດຕໍ່ຫາພວກເຮົາຜ່ານບໍຣິການຖ່າຍທອດແຫ່ງຊາດ (National Relay Service [NRS]):

- ຜູ້ໃຊ້ ບໍຣິການ TTY ຈົ່ງໂທຫາໝາຍເລກ 13 36 77 ແລ້ວບອກໝາຍເລກ 13 23 26.
- ຜູ້ໃຊ້ ບໍຣິການ ເວົ້າ ແລະ ຟັງ ຈົ່ງໂທໝາຍເລກ 1300 555 727 ແລ້ວບອກໝາຍເລກ 13 23 26.
- ຜູ້ທີ່ໃຊ້ບໍຣິການອິນເຕີເນັດຖ່າຍທອດ ຈົ່ງຕໍ່ເຂົ້າຫາ NRS ແລ້ວຂໍເອົາ ໝາຍເລກ 13 23 26.

## ຂໍ້ມູນເປັນພາສາອື່ນໆ

ຄໍາແນະນໍາສະບັບນີ້ທີ່ແປໄວ້ແລ້ວສາມາດດາວໂຫຼດເອົາໄດ້ຈາກ **www.aec.gov.au/translated**.

## ບໍຣິການ ນາຍພາສາ ທາງ ໂທຣະສັບ

ບໍຣິການ ນາຍພາສາທາງໂທຣະສັບກໍມີໄວ້ໃຫ້ສໍາລັບ ຂໍ້ມູນກ່ຽວກັບການປ່ອນບັດເລືອກຕັ້ງ ແລະການເລືອກຕັ້ງ. ຈົ່ງໂທຫາໝາຍເລກ 1300 720 153 ແລະຂໍເອົາພາສາຂອງທ່ານ.

ການປ່ອນບັດເລືອກຕັ້ງແມ່ນເປັນການບັງຄັບສໍາລັບຄົນອອສເຕຣລຽນທີ່ມີອາຍຸ 18ປີ ແລະຫຼາຍກວ່າ. ຖ້າທ່ານບໍ່ປ່ອນບັດເລືອກຕັ້ງ, ທ່ານອາດຈະຖືກປັບໃໝ.

ຖ້າທ່ານປ່ອນບັດຫຼາຍກວ່ານຶ່ງຄັ້ງຖືວ່າເປັນຄວາມຜິດທາງ ອາຊຍາກັມ.

17_0919

**www.aec.gov.au** 13 23 26

AEC
Australian Electoral Commission

Authorised by the Electoral Commissioner, Canberra.